# ການສ້າງລັດແຫ່ງກົດໝາຍ, ການເຂົ້າເຖິງ ລະບົບຍຸຕິທຳ ແລະ ການປົກຄອງທີ່ດີ (ROLAG)

*ແຜນງານ LAO/037*



**ຂະແໜງການ** | ການປົກຄອງ

**ອົງການ** | LuxDev, ສະຖາບັນ ເພື່ອຊຸກຍູ້ທາງດ້ານກົດໝາຍ ແລະ ຊ່ວຍເຫຼືອທາງດ້ານ ເຕັກນິກ, ມະຫາວິທະຍາໄລ ລູກຊຳບວກ

**ໄລຍະໂຄງການ** | 01.01.2023 – 31.12.2027 (60 ເດືອນ)

**ບັນດາກຸ່ມເປົ້າໝາຍ**

ປະຊາຊົນທີ່ອາໄສໃນ ສປປ ລາວ, ໂດຍສະເພາະ ຜູ້ທີ່ຢູ່ໃນເຂດທີ່ເປັນເປົ້າໝາຍໃນການເຂົ້າໄປມີສ່ວນຮ່ວມ, ໂດຍສະເພາະ ບັນດາ ແມ່ຍິງ,ເດັກນ້ອຍ, ຄົນພິການ ຫຼື ບຸກຄົນທີ່ຕົກຢູ່ໃນຄວາມສ່ຽງ.

**ບັນດາສະຖາບັນທີ່ຜູກພັນ**

ກະຊວງ ຍຸຕິທຳ; ກະຊວງ ສຶກສາທິການ ແລະ ກິລາ; ຄະນະ ນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລ;
ແຫ່ງຊາດ. ນອກນັ້ນ, ຍັງໃຫ້ການຊ່ວຍເຫຼືອແກ່ ກົມສົນທິສັນຍາ ແລະ ກົດໝາຍ, ກະຊວງ ການຕ່າງປະເທດ; ແລະ
ກອງເລຂາວ່າດ້ວຍການຮ່ວມມືສາກົນ ແລະ ການຄຸ້ມຄອງໂຄງການ, ສະພາແຫ່ງຊາດ.

**ນະໂຍບາຍຂອງຂະແໜງການ ແລະຍຸດທະສາດທີ່ອ້າງອີງ**

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9, ມະຕິເລກທີ. 37ຂອງສູນກາງພັກປະຊາຊົນປະຕິວັດລາວ ແລະ ມະຕິເລກທີ. 112 ຂອງກົມການເມືອງສູນກາງພັກ.

**ງົບປະມານ** | 11,457,379 ເອີໂຣ




ເມື່ອ 5 ປີຜ່ານມາ, ໄດ້ມີການສ້າງຄວາມເຂັ້ມແຂງຢ່າງໃຫ່ຍຫຼວງຕໍ່ກັບກອບນິຕິ ກຳຂອງສປປ ລາວ, ເຊິ່ງໄດ້ມີຫຼາຍໆກົດໝາຍທີ່ສຳຄັນທີ່ໄດ້ຮັບການຮັບຮອງ ແລະ ທົບ ທວນ. ໃນຂັ້ນນະໂຍບາຍ, ເນື່ອງຈາກວ່າ ແຜນແມ່ບົດຂອງຂະແໜງກົດໝາຍປະຈຳປີ 2020 ໄດ້ໝົດອາຍຸ, ຈຶ່ງໄດ້ມີການສຸມໃສ່ການເພີ່ມການຫັນຈາກການສ້າງກົດໝາຍ ມາເປັນ ການຈັດຕັ້ງປະຕິບັດກົດໝາຍແທນ, ລວມທັງ ກົນໄກໃນການສ້າງຄວາມເຂັ້ມແຂງຕໍ່ກັບຄວາມໜ້າເຊື່ອຖືຂອງສະຖາບັນພາກລັດ. ລະບົບຍຸຕິທຳຂອງສປປ ລາວ ຍັງປະສົບສິ່ງທ້າ ທາຍນາໆປະການ, ລວມທັງ ການຂາດຄວາມສາມາດ, ຄວາມຕ້ອງການໃນການຊີ້ ນຳໃຫ້ຫຼາຍຂຶ້ນຕໍ່ກັບລະບົບຍຸຕິທຳ, ການເຂົ້າເຖິງຂໍ້ມູນ ແລະ ການໃຫ້ ຄຳປຶກສາທາງດ້ານກົດໝາຍ, ການເກັບກຳ ແລະ ວິເຄາະຂໍ້ມູນທາງດ້ານກົດ ໝາຍທີ່ເປັນລະບົບ ແລະ ມີຄວາມໜ້າເຊື່ອຖື, ລວມທັງ ຄວາມຕ້ອງການໃນການຊີ້ ນຳສະຖາບັນຂອງລັດຖະບານທີ່ເຂັ້ມແຂງຂຶ້ນ. ນອກນັ້ນ, ການສຶກສາ ແລະ ການຄົ້ນຄ້ວາ ຂະແໜງກົດໝາຍຍັງຕ້ອງການການສ້າງຄວາມເຂັ້ມແຂງທີ່ສືບເນື່ອງ ແລະ ມີປະສິດທິພາບເພື່ອທີ່ຈະສາມາດຮັບປະກັນວ່າ ບັນດານັກສຶກສາທີ່ຮຽນຈົບສາມາດມີອຸດທິໃນການປະ ກອບສ່ວນໃນການບັນລຸເປົ້າໝາຍດັ່ງກ່າວ ລວມທັງ ເປັນການຮັບປະກັນວ່າ ການສ້າງນະໂຍບາຍແມ່ນ ມາຈາກການວິເຄາະທີ່ອາໄສຂໍ້ມູນທີ່ເປັນຄວາມຈິງ.

ເປົ້າໝາຍສູງສຸດຂອງແຜນງານ ROLAG ແມ່ນເພື່ອເສີມສ້າງລັດແຫ່ງກົດໝາຍ, ເພື່ອໃຫ້ສາມາດເຂົ້າເຖິງລະບົບຍຸຕິທຳ ແລະ ການປົກຄອງທີ່ດີຂອງປະຊາຊົນ ລາວໃນການໃຊ້ສິດທິຂອງຕົນ. ແຜງານທີ່ໄດ້ຮັບການສະໜອງ ທຶນໂດຍລຸກຊຳບວກໃນເມື່ອກ່ອນໄດ້ມີໝາກຜົນສຳເລັດທີ່ດີໃນການ ປັບປຸງຂະແໜງການກົດໝາຍໃນ ສປປ ລາວ ເທື່ອລະກ້າວ. ອີງຕາມ ຜົນສຳເລັດ ທີ່ດີດັ່ງກ່າວນັ້ນ, ແຜນງານ ROLAG ຍັງໄດ້ສືບຕໍ່ໃຫ້ການຊຸກຍູ້ຫຼາຍໆຂົງເຂດຂອງ ຂະແໜງ ກົດໝາຍອີກດ້ວຍ, ລວມທັງ ໃນຂະແໜງການສຶກສຊັ້ນສູງ ແລະ ການເຂົ້າເຖິງລະບົບຍຸຕິທຳ. ແຜນງານດັ່ງ ກ່າວນີ້ ຈະໄດ້ຮັບການຈັດຕັ້ງ ປະຕິບັດ ໃນທົ່ວປະເທດໂດຍສຸມໃສ່ບັນ ດາແຂວງເປົ້າໝາຍເຊັ່ນ: ແຂວງວຽງຈັນ, ບໍລິຄຳໄຊ, ຄຳ ມ່ວນ, ບໍ່ແກ້ວ ແລະ ຈຳປາສັກ.

ຢ່າງໃດກໍ່ຕາມ, ຈຸດສຸມ ແມ່ນເພື່ອເປັນການສ້າງຄວາມເຂັ້ມແຂງ ໃຫ້ແກ່ຄວາມອາດສາມາດຂອງສະຖາບັນຂັ້ນສູນກາງ ແລະ ສາມາດຊຸກຍູ້ໃນການສົ່ງຕໍ່ຄວາມອາດສາມາດດັ່ງກ່າວໃນທົ່ວລະບົບລົງໄປເຖິງ ຂັ້ນແຂວງ ແລະ ຂັ້ນ ເມືອງອີກດ້ວຍ.

ການປະສານງານຢ່າງໃກ້ຊິດກັບອົງການ LuxDev, ສະຖາບັນເພື່ອການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ເຕັກນິກ, ລວມທັງ ມະຫາວິທະຍາໄລ ລູກຊຳບວກໃນຫຼາຍໆຂົງເຂດທີ່ມີສ່ວນຮ່ວມແມ່ນເປັນການຮັບ ປະກັນການຈັດຕັ້ງປະຕິບັດທີ່ຄົບຖ້ວນເໝາະສົມ ແລະ ເປັນການນຳໃຊ້ຊັບພະຍາກອນ ທີ່ມີປະສິດທິພາບ.

ບັນດາຜູ້ທີ່ໄດ້ຮັບຜົນປະໂຫຍດຫຼັກຂອງແຜນງານ ລວມມີ: ຄູ-ອາຈານໂດຍສະເພາະທີ່ຄະນະນິຕິສາດ, ລັດຖະສາດ ມະຫາວິທະ ຍາໄລແຫ່ງຊາດ; ຄະນະນິຕິສາດ ແລະ ບໍລິຫານ, ມະຫາວິທະ ຍາໄລຈຳ ປາສັກ; ນັກກົດໝາຍ ແລະ ພະນັກງານ-ລັດຖະ ກອນໃນຂະແໜງກົດໝາຍ, ລວມທັງ ບັນດາໜ່ວຍງານ ໃນຂະແໜງ ກົດໝາຍເຊັ່ນ: ຫ້ອງການ ໄອຍາການປະຊາຊົນສູງສຸດ, ສານປະຊາຊົນ ສູງສຸດ, ລວມທັງ ພະແນກ ຄຸມຂັງທີ່ຢູ່ພາຍໃຕ້ກະຊວງ ປ້ອງກັນຄວາມ ສະຫງົບ, ພະນັກງານ-ລັດຖະກອນຂອງກະຊວງຍຸຕິທຳ, ລວມທັງ ບັນດາສະມາຊິກຂອງສະພາແຫ່ງຊາດ (ເປົ້າໝາຍແມ່ນເພື່ອສ້າງສະ ພາບແວດລ້ອມທາງກົດໝາຍທັງໝົດ - ຂະແໜງການ ຄົ້ນຄ້ວາ ວິຊາການ ແລະ ສາຍອາຊີບ).

ບັນດາຜູ້ທີ່ໄດ້ຮັບຜົນປະໂຫຍດໃນຂັ້ນທ້ອງຖິ່ນ, ລວມມີ ບັນດາໜ່ວຍງານຂະແໜງກົດໝາຍ, ໂດຍສະເພາະພະນັກງານຂອງ ຫ້ອງການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍທີ່ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ກະຊວງຍຸຕິທຳໂດຍຮ່ວມກັບບັນດາແຂວງ ແລະ ທີ່ ເປັນຄູ່ຮ່ວມ; ສະພາປະຊາຊົນຂັ້ນແຂວງ, ລວມທັງ ບຸກຄົນ ແລະ ຊຸມ ຊົນໃນບັນດາແຂວງ ແລະ ເມືອງທີ່ເປັນສ່ວນຮ່ວມດັ່ງກ່າວອີກ ດ້ວຍ.

**ປະຊາຊົນລາວ ໄດ້ຮັບຜົນປະໂຫຍດຈາກການສ້າງລັດແຫ່ງກົດໝາຍທີ່ໄດ້ຮັບການສ້າງຄວາມເຂັ້ມແຂງ, ການສ້າງຂີດຄວາມສາມາດໃນການເຂົ້າເຖິງລະບົບຍຸຕິທຳ ແລະ ການປົກຄອງທີ່ດີ ເພື່ອເຮັດໃຫ້ເຂົາເຈົ້າສາມາດນຳໃຊ້ສິດທິຂອງຕົນໄດ້ເຕັມຮູບແບບ.**

- ການສຶກສາຊັ້ນສູງໃນຂະແໜງກົດໝາຍຕອບຮັບຕໍ່ກັບຄວາມຕ້ອງການລະດັບຊາດໃນການສ້າງລັດແຫ່ງກົດໝາຍ.
- ລະບົບຍຸຕິທຳໄດ້ຮັບການດຳເນີນງານອີງຕາມກົດໝາຍ ແລະ ນະໂຍບາຍ ພາຍໃນທີ່ສອດຄ່ອງ ກັບມາດຕະຖານສາກົນ.
- ຮັບປະກັນວ່າ ບັງຄັບໃຊ້ຄຳ ຕັດສິນຂອງສານແມ່ນປະຕິບັດຕາມກົດໝາຍ ແລະ ນະໂຍບາຍພາຍ ໃນເຊິ່ງສອດຄ່ອງກັບມາດ ຕະຖານສາກົນ.
- ປະຊາຊົນລາວ ສາມາດເຂົ້າເຖິງການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການ ໄກ່ເກ່ຍຂັ້ນ ບ້ານທີ່ມີການກຳນົດໃຫ້ຖືກຕ້ອງຕາມກົດໝາຍ ແລະ ສາມາດຊີ້ ໄດ້ຕາມຄວາມຕ້ອງການ ແລະ ສິດຂອງເຂົາເຈົ້າ.
- ໜ່ວຍງານພາກລັດ ມີການດຳເນີນງານບົນຫຼັກການວ່າດ້ວຍ ການປົກຄອງທີ່ດີ, ລວມທັງ ຄວາມໜ້າເຊື່ອຖືຈາກສາທາລະນະ.

## ວິໄສທັດແຫ່ງການປ່ຽນແປງ

ເພື່ອໃຫ້ສາມາດບັນລຸຕາມເປົ້າໝາຍທີ່ຄາດໄວ້, ແຜນງານ ROLAG ແມ່ນໄດ້ຮັບສ້າງມາຈາກທິດສະດີດ້ານການປ່ຽນແປງທີ່ສາມາດອະທິບາຍໄດ້ຄື: ແຜນງານ ROLAG ໄດ້ປະກອບສ່ວນ ເຂົ້າໃນການສຶກສາຂະແໜງກົດໝາຍທີ່ມີຄຸນະພາບໃນມະຫາວິທະຍາໄລ ເພື່ອທີ່ຈະສາມາດສະໜອງການບໍລິການໃນຂະແໜງຍຸຕິທຳທີ່ມີປະສິດທິພາບໃຫ້ແກ່ປະຊາຊົນໃນທຸກລະດັບ, ພ້ອມນັ້ນ ກໍ່ເປັນການເຮັດໃຫ້ສາທາລະນະມີສ່ວນຮ່ວມໃນການສ້າງຄວາມເຂັ້ມແຂງໃຫ້ລະບົບຍຸຕິທຳອີກດ້ວຍ, ການສ້າງລັດແຫ່ງກົດໝາຍ, ແລະ ການປົກຄອງໂດຍລວມ, ໃນການປະຕິບັດຕົວຈິງນັ້ນ, ແມ່ນກ່ຽວຂ້ອງກັບການອຳນວຍຄວາມສະດວກໃນການເຂົ້າເຖິງລະບົບຍຸຕິທຳ ແລະ ການເສີມສ້າງຄວາມໜ້າເຊື່ອຖືໃນລະບົບ. ເຊິ່ງເປົ້າໝາຍແມ່ນເພື່ອເປັນການສົ່ງເສີມສິດທິພື້ນຖານ, ການຮັບມືຈາກຂັ້ນລຸ່ມໃນການເຊື່ອມຈອດທິດສະດີລະດັບສູງເຂົ້າກັບພາກປະຕິບັດ ເຊິ່ງຈະເປັນການເພີ່ມປະສິບການຈາກການປະຕິບັດຕົວຈິງເຂົ້າສູ່ການວາງແຜນ ແລະ ການສ້າງນະໂຍບາຍລະດັບຊາດອີກດ້ວຍ.

ຂົງເຂດການປ່ຽນແປງໄລຍະກາງທີ່ເຊື່ອມຈອດການ ໄດ້ຊ່ວຍໃຫ້ສາມາດບັນລຸຈຸດປະສົງໄລຍະຍາວໄດ້.

### ການສຶກສາຊັ້ນສູງໃນຂະແໜງກົດໝາຍຕອບຮັບຕໍ່ກັບຄວາມຕ້ອງການລະດັບຊາດໃນການສ້າງລັດແຫ່ງກົດໝາຍ

ເຮັດໃຫ້ນັກສຶກສາຄະນະນິຕິສາດ, ລັດຖະສາດ ສາມາດທີທັກສະ ແລະ ຄວາມຮູ້ທີ່ຈຳເປັນໃນການເປັນຊັບພະຍາກອນທີ່ດີຂອງລະບົບກົດໝາຍ, ສະຖາບັນພາກລັດ ແລະ ຂະແໜງເອກະຊົນ. ການມີສະພາບແວດລ້ອມດ້ານການຄົ້ນຄ້ວາວິຊາການທີ່ຊີວິດຊີວາ ທີ່ເປັນການສົ່ງເສີມການສອນ ແລະ ການຄົ້ນຄ້ວາທີ່ມີຄຸນະພາບສູງ ແມ່ນເປັນສິ່ງທີ່ຈຳເປັນໃນການສ້າງນັກກົດໝາຍທີ່ມີຄວາມພ້ອມ ຮອບດ້ານ ແລະ ເປັນການສ້າງກົດໝາຍ ແລະ ນະໂຍບາຍທີ່ສ້າງຈາກຫຼັກຖານຕົວຈິງອີກດ້ວຍ.

### ມີການດຳເນີນງານຂອງລະບົບຍຸຕິທຳທີ່ປະຕິບັດຕາມມາດຕະຖານສາກົນ

ການປົກປ້ອງສິດທິຂອງປະຊາຊົນທີ່ມີປະສິດທິພາບ ແມ່ນຈຳເປັນທີ່ຈະຕ້ອງມີລະບົບສານທີ່ໜ້າເຊື່ອຖືໄດ້ ພ້ອມກັບບັນດາຂັ້ນຕອນ ແລະ ການຕັດສິນໃຈທີ່ມີປະສິດທິຜົນ. ເຊິ່ງຈະມີການໃຫ້ການຊ່ວຍເຫຼືອແກ່ ຜູ້ພິພາກສາ, ສານ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍ ໃນການເສີມສ້າງຄວາມສາມາດ ແລະ ການຈັດຕັ້ງປະຕິບັດບັນດາຂັ້ນຕອນດັ່ງກ່າວຢ່າງມີປະສິດທິຜົນ. ນອກນັ້ນ, ຈະມີການຊຸກຍູ້ທາງດ້ານເຄື່ອງມືອຸປະກອນ ແລະ ພື້ນຖານໂຄງລ່າງອີກດ້ວຍ.

### ການຕັດສິນແມ່ນມີການບັງຄັບໃຊ້ຢ່າງມີປະສິດທິພາບຕາມກົດໝາຍ ແລະ ນະໂຍບາຍລະດັບຊາດພາຍໃນລະບົບການຕັດສິນຈຳຄຸກທີ່ສອດຄ່ອງຕາມ ມາດຕະຖານສາກົນ

ການທີ່ມີລະບົບການຕັດສິນຈຳຄຸກທີ່ເໝາະສົມແມ່ນ ເປັນສິ່ງຈຳເປັນໃນການປ້ອງກັນສິດທິຂອງບຸກຄົນ, ໂດຍສະເພາະ ຜູ້ທີ່ດ້ອຍໂອກາດ. ການປະຕິບັດຕາມຂໍ້ຈຳກັດໃນການກັກຕົວ ແະ ການຮັບປະກັນການເຂົ້າເຖິງອົງປະກອບພື້ນຖານທີ່ຈຳເປັນເຊັ່ນ: ສຸຂະພາບ, ໂພຊະນາການ, ນ້ຳ, ສຸຂະອະນາໄມ ແລະ ສຸຂາພິບານແມ່ນເປັນພື້ນຖານໃນການປະຕິບັດຕາມມາດຕະຖານສາກົນ. ຈະມີການຂະຫຍາຍການໃຫ້ຄວາມຊ່ວຍເຫຼືອແກ່ຫ້ອງການໄອຍາການ ແລະ ພະແນກຄຸ້ມຂັງໃນການເສີມສ້າງຄວາມສາມາດ, ການສ້າງຂັ້ນຕອນທີ່ມີປະສິດທິພາບ, ລວມທັງ ການສະໜອງເຄື່ອງມືອຸປະກອນ ແລະ ລະບົບພື້ນຖານໂຄງລ່າງທີ່ຈຳເປັນອີກດ້ວຍ.

### ປະຊາຊົນລາວ ສາມາດເຂົ້າເຖິງການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການໄກ່ເກ່ຍຂັ້ນບ້ານທີ່ມີການກຳນົດໃຫ້ຖືກຕ້ອງຕາມກົດໝາຍ ແລະ ສາມາດຊີ້ໄດ້ອີງຕາມສິດ ແລະ ຄວາມສາມາດ

ຮັບປະກັນການເຂົ້າເຖິງລະບົບຍຸຕິທຳທີ່ມີປະສິດທິພາບຂອງປະຊາຊົນມນຊຸມຊົນ, ໂດຍສະເພາະ ຜູ້ທີ່ດ້ອຍໂອກາດເນື່ອງຈາກຄວາມທຸກຍາກ, ປະສົບກັບຄວາມຮຸນແຮງ ຫຼື ການຖືກເອົາປຽບ, ລວມທັງ ປະຊາຊົນທີ່ຢູ່ໃນບັນດາບ້ານເຂດຫ່າງໄກຊອກຫຼີກໃນທົ່ວປະເທດອີກດ້ວຍ ເຊິ່ງເປັນເປົ້າໝາຍສູງສຸດຂອງລັດຖະບານແຫ່ງ ສປປ ລາວ ເຊິ່ງຈະມາດປະກົດຜົນ ເປັນຈິງໂດຍ ຜ່ານຫ້ອງການ ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍທີ່ໄດ້ຮັບການສ້າງຂຶ້ນໃນຂັ້ນເມືອງ ແລະ ຂັ້ນແຂວງ. ໂດຍຜ່ານການເຂົ້າເຖິງດັ່ງກ່າວ, ຈະມີການສະໜອງຂໍ້ມູນທາງດ້ານກົດໝາຍ, ການໃຫ້ຄຳແນະນຳ ແລະ ການໃຫ້ການ ຊ່ວຍເຫຼືອຕ່າງໆໂດຍທີ່ບໍ່ເສຍຄ່າໃຊ້ຈ່າຍ, ລວມທັງ ການຮັບປະກັນວ່າ ປະຊາຊົນທຸກຄົນແມ່ນເຂົ້າໃຈກ່ຽວກັບສິດທິຂອງເຂົາເຈົ້າອີງຕາມກົດໝາຍ ເຊິ່ງຫ້ອງການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ໜ່ວຍງານໄກ່ເກ່ຍຂັ້ນບ້ານ ແມ່ນຈະສາມາດຮັບປະກັນວ່າ ປະຊາຊົນທີ່ຕ້ອງການການຊ່ວຍເຫຼືອດັ່ງກ່າວ ແມ່ນສາມາດເຂົ້າເຖິງຄວາມຮູ້ ແລະ ແຫຼ່ງທີ່ເໝາະສົມ.

### ການປະຕິບັດງານຂອງໜ່ວຍງານລັດແມ່ນປະຕິບັດຕາມຫຼັກການວ່າດ້ວຍ ການປົກຄອງທີ່ດີ, ລວມທັງ ໄດ້ຮັບຄວາມໄວ້ວາງໃຈຈາກສາທະລະນະ

ຄວາມໜ້າເຊື່ອຖືຈາກສາທາລະນະແມ່ນເປັນເສົາຫຼັກໃນການສ້າງລັດແຫ່ງກົດໝາຍ ແລະ ອາໄສການລັດບໍລິຫານ ແລະ ການເງິນທີ່ເຂັ້ມແຂງ, ລວມທັງການຊີ້ນຳທີ່ເຂັ້ມແຂງຂອງພາກລັດອີກດ້ວຍ. ກົນໄກການຊີ້ນຳທີ່ເຂັ້ມແຂງ ລວມມີ ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ຫ້ອງການຕ້ານການຟອກເງິນ, ສະພາບໍລິຫານ, ອົງການກວດສອບລັດຖະບານ, ລວມທັງ ອົງການກວດສອບແຫ່ງລັດ. ເຊິ່ງຂົງເຂດການປ່ຽນແປງໄລຍະກາງ ແມ່ນຈະເປັນການເສີມສ້າງຄວາມສາມາດ ແລະ ເປັນຂັ້ນຕອນຂອງບັນດາອົງກອນດັ່ງກ່າວ, ລວມທັງ ລະບົບຂໍ້ມູນຂ່າວສານ ແລະ ການຄຸ້ມຄອງຄະດີອີກດ້ວຍ.


**ຕິດຕໍ່ ອົງການ LuxDev**

ຫ້ອງການປະຈຳອາຊີ, ອົງການ LuxDev | ໂຄງການການສ້າງລັດແຫ່ງກົດໝາຍ, ການເຂົ້າເຖິງລະບົບຍຸຕິທຳ ແລະ ການປົກຄອງທີ່ດີ
ຖະໜົນ ດົງໄປນາ, ບ້ານ ສະພານທອງເໜືອ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ

luxdev.lu


ກະຊວງ ການສຶກສາ ແລະກິລາ